ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------------------

ກະຊວງການເງິນ

ຄັງເງິນແຫ່ງຊາດ

3005 /ກງ.ຄງຊ

ເລກທີ 3005 /ກງ.ຄງຊ

ນະຄອນຫລວງວຽງຈັນ, ວັນທີ 29 JUN 2017

## ແຈ້ງການ

ເຖິງ : ຫົວໜ້າຄັງເງິນແຫ່ງຊາດ ປະຈຳແຂວງ ແລະ ນະຄອນຫຼວງ.

ເລື່ອງ : ນຳສົ່ງ ຄຳແນະນຳ ຂອງທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ.

- ອີງຕາມ: ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ 515/ກງ, ລົງວັນທີ 05 ມີນາ 2015 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄັງເງິນແຫ່ງຊາດ.
- ອີງຕາມ: ການຕົກລົງເຫັນດີ ຂອງຄະນະນຳຄັງເງິນແຫ່ງຊາດ ຄັ້ງວັນທີ 27 ມິຖຸນາ 2017.

ເພື່ອເຮັດໃຫ້ ບົດແນະນຳ ຂອງທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ສະບັບເລກທີ 1969/ກງ, ລົງວັນທີ 12 ມິຖຸນາ 2017 ກ່ຽວກັບ ການຈັດຕັ້ງແຜນ ລາຍຮັບ-ລາຍຈ່າຍງົບປະມານ ຄ່າບໍລິການທາງດ້ານວິຊາການ ແລະ ກອງທຶນຂອງລັດ ສົກປີ 2017, ໄດ້ຮັບການຈັດຕັ້ງເຜີຍແຜ່ ໃຫ້ ພະນັກງານ ຄັງເງິນແຫ່ງຊາດ ຂັ້ນແຂວງ /ນະຄອນຫຼວງ ໄດ້ຮັບຮູ້ຢ່າງເລິກເຊິ່ງ, ທົ່ວເຖິງ, ທັນເວລາ ແລະ ໄດ້ຈັດຕັ້ງປະຕິບັດ.

**ຫົວໜ້າຄັງເງິນແຫ່ງຊາດ ອອກແຈ້ງການ ດັ່ງນີ້:**

1. ໃຫ້ຄັງເງິນແຫ່ງຊາດ ປະຈຳແຂວງ ແລະ ນະຄອນຫຼວງ ຮີບຮ້ອນຈັດຕັ້ງເຜີຍແຜ່ ຄຳແນະນຳ ຂອງທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ສະບັບເລກທີ 1969/ກງ, ລົງວັນທີ 12 ມິຖຸນາ 2017, ໃຫ້ ພະນັກງານ ຄັງເງິນແຫ່ງຊາດ ຂັ້ນແຂວງ /ນະຄອນຫຼວງ ໄດ້ຮັບຮູ້ຢ່າງເລິກເຊິ່ງ, ທົ່ວເຖິງ ແລະ ໄດ້ຈັດຕັ້ງປະຕິບັດ ທັນເວລາ.
2. ພາຍຫຼັງການຈັດຕັ້ງເຜີຍແຜ່ ສຳເລັດແລ້ວ, ຄັງເງິນແຫ່ງຊາດ ປະຈຳແຂວງ/ນະຄອນຫຼວງ ລາຍງານຜົນໄດ້ຮັບ ໃຫ້ ຄັງເງິນແຫ່ງຊາດ ພາຍໃນ ເດືອນ ກໍລະກົດ ປີ2017, ເພື່ອຈະລາຍງານຕໍ່ ຄະນະພັກ, ຄະນະນຳ ກະຊວງການເງິນ.
3. ແຈ້ງການສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າຄັງເງິນແຫ່ງຊາດ**

ພອນ ທິບມະສອນ